ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2816 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 14 ທັນວາ 2022

# ແຈ້ງການ

ເຖິງ: ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດ ພາຍໃນນະຄອນຫຼວງວຽງຈັນ.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມປະມູນສົມທຽບລາຄາກ່ຽວກັບການຕອບສະໜອງເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ, ການສ້ອມແປງບຳລຸງຮັກສາລະບົບແອເຢັນ-ໄຟຟ້າ ແລະ ສ້ອມແປງນ້ອຍ, ການບໍລິການສ້ອມແປງປ່ຽນຖ່າຍອາໄຫລ່ ແລະ ບຳລຸງຮັກສາພາຫະນະ, ການບໍລິການອານາໄມຕຶກສຳນັກງານ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳປີ 2023.

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ນຍ,ລົງວັນທີ 02 ພະຈິກ 2017.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020.
- ອີງຕາມຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ ສະບັບເລກທີ 4000/ກງ,ລົງວັນທີ 12 ທັນວາ 2018.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດພາຍໃນນະຄອນຫຼວງວຽງຈັນ, ທີ່ມີຈຸດປະສົງຢາກເຂົ້າຮ່ວມປະມູນສົມທຽບລາຄາ (ຕາມລາຍການຕາຕະລາງຄັດຕິດມາພ້ອມ) ເພື່ອຕອບສະໜອງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳປີ 2023 ດ້ວຍງົບປະມານຂອງລັດ ລາຍລະອຽດມີດັ່ງລຸ່ມນີ້:

1. ການຕອບສະໜອງເຄື່ອງໃຊ້ຫ້ອງການ, ເຄື່ອງຮັບແຂກ, ເຄື່ອງອານາໄມສຳນັກງານ ແລະ ເຄື່ອງບຳລຸງຮັກສາພາຫະນະ (ຕາຕະລາງ 1).
2. ການຕອບສະໜອງ ແລະ ຕິດຕັ້ງສ້ອມແປງເຄື່ອງໄອທີ (ຄອມພິວເຕີ, ຈັກກ້ອບປີ້, ປິ້ນເຕີ, ເຄື່ອງແຟັກເອກະສານ , ເຄື່ອງສະແກນ, ນ້ຳມຶກຈັກກ້ອບປີ້-ປິ້ນເຕີ (ຕາຕະລາງ 2).
3. ການຕອບສະໜອງອຸປະກອນບຳລຸງຮັກສາສຳນັກງານເຊັ່ນ: ການສ້ອມແປງປ່ຽນຖ່າຍອາໄຫລ່ລະບົບແອເຢັນ, ລະບົບໄຟຟ້າ ແລະ ວຽກກໍ່ສ້າງສ້ອມແປງຂະໜາດນ້ອຍ (ຕາຕະລາງ 3).
4. ການບໍລິການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍເຄື່ອງອາໄຫລ່ພາຫະນະ (ຕາຕະລາງ 4).
5. ການບໍລິການອານາໄມຕຶກສຳນັກງານຂອງກະຊວງອຸດສາຫະກຳ ແລະ ການຄ້າ (ຕາຕະລາງ 5).

ໃນ **05 ລາຍການ** ທີ່ກ່າວມາຂ້າງເທິງນີ້ ບໍລິສັດໃດ ຫຼື ວິສາຫະກິດໃດ ທີ່ຈະເຂົ້າຮ່ວມການປະມູນແມ່ນມີສິດເລືອກໄດ້ພຽງ 01 ລາຍການເທົ່ານັ້ນ ແລະ ຕ້ອງໄດ້ປະຕິບັດຕາມລະບຽບ ແລະ ເງື່ອນໄຂດັ່ງນີ້:

I. ກຳນົດຂອບເຂດເວລາ:

- ສາມາດພົວພັນຊື້ຊອງປະມູນໄດ້ທີ່ ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ( ພະແນກບໍລິຫານ ແລະ ພິທີການ ) ນັບແຕ່ວັນທີ.15/12/2022.ຫາ.21/12/2022.ແລະ ສົ່ງຊອງປະມູນໃຫ້ຄະນະກຳມະການປະມູນບໍ່ໃຫ້ກາຍເວລາ.12:00........ໂມງ ຂອງວັນທີ.27/12/2022.ທີ່ຫ້ອງການຊັ້ນ..03....ແລະ ຈະມີການເປີດຊອງປະຊຸມ ໃນເວລາ.14:00.........ໂມງ ຂອງວັນດຽວກັນ.
- ລາຄາຊອງປະມູນ ຊອງລະ **300.000 ກີບ/ຊອງ** (ເງິນຊື້ຊອງປະມູນນີ້ແມ່ນບໍ່ໄດ້ສົ່ງຄືນ).
- ພາຍຫຼັງສຳເລັດການເປີດຊອງປະມູນພາຍໃນ 07 ວັນ ຈະແຈ້ງຜົນການປະມູນໃຫ້ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດຮັບຊາບ ແລະ ແຈ້ງເຊີນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນເຂົ້າມາຮ່ວມຕົກລົງເຈລະຈາເຊັນສັນຍາກັບຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມລະບຽບການ.

II. ເອກະສານທີ່ຕ້ອງປະກອບຄັດຕິດມາພ້ອມຊອງປະມູນ:

- ຕ້ອງມີໃບທະບຽນວິສາຫະກິດທີ່ຖືກຕ້ອງ.
- ຕ້ອງມີໃບທະບຽນອາກອນ ຫຼື ໃບຢັ້ງຢືນການເສຍອາກອນ ປະຈຳປີ 2022.
- ຕ້ອງມີໃບບິນອາກອນສະເພາະຂອງວິສາຫະກິດ.
- ຕ້ອງມີໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການທີ່ກ່ຽວຂ້ອງ (ຖ້າມີ).
- ຕ້ອງມີແຜນວາດທີ່ຕັ້ງຂອງບໍລິສັດ ແລະ ວິສາຫະກິດ, ທີ່ຢູ່, ເບີໂທ ຫຼື Email.
- ຕ້ອງລະບຸບັນດາເຄື່ອງຂອງ, ອຸປະກອນ ແລະ ສິນຄ້າ ຜະລິດຈາກປະເທດໃດ ຕາມລາຍການທີ່ກຳນົດຢູ່ໃນຕາຕະລາງ, ພ້ອມທັງສະຫຼຸບສັງລວມຕົວເລກທັງໝົດຂອງແຕ່ລະລາຍການ ແລະ ຕົວເລກລວມຂອງແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ຊັດເຈນ), ທຸກໆລາຍການຕ້ອງໃສ່ລາຄາໃຫ້ຄົບຕາມຕາຕະລາງ (ລາຄາທີ່ໃສ່ໃນຕາຕະລາງແມ່ນລວມອາກອນທັງໝົດ), ຖ້າບໍ່ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງ ຖືວ່າວິສາຫະກິດນັ້ນ ແມ່ນຖືກສະຫຼະສິດ ແລະ ຈະບໍ່ຮັບພິຈາລະນາ.

III. ເງື່ອນໄຂມາດຖານ ແລະ ຄວາມພ້ອມຂອງບໍລິສັດ ແລະ ວິສາຫະກິດ:

- ວິສາຫະກິດຕ້ອງຕອບສະໜອງວັດຖຸອຸປະກອນໃຫ້ຄູ່ສັນຍາຕາມກຳນົດເວລາທີ່ຕົກລົງກັນໄວ້ໃນສັນຍາ.
- ຕ້ອງເປັນວິສາຫະກິດທີ່ມີການເຄື່ອນໄຫວດຳເນີນທຸລະກິດທີ່ມີປະສົບການຢ່າງໜ້ອຍ 02 ປີ ຂຶ້ນໄປ.
- ວິສາຫະກິດຕ້ອງມີວິຊາການ, ນາຍຊ່າງຂອງຕົນ ທີ່ມີປະສົບການ ໃນການຕິດຕັ້ງ, ສ້ອມແປງ ຢ່າງໜ້ອຍ 02 ຄົນຂຶ້ນໄປ.

IV. ເງື່ອນໄຂການຊຳລະສະສາງ:

ການຊຳລະສະສາງແມ່ນນຳໃຊ້ຮ່ວງເງິນງົບປະມານ ປະຈຳປີ 2023 ຂອງກະຊວງອຸດສາຫະກຳ ແລະ ການຄ້າ ດ້ວຍລະບົບເງິນໂອນ (ປະຕິບັດຕາມລະບຽບຂອງກະຊວງການເງິນ) ຊຶ່ງການຊຳລະແມ່ນໄດ້ຊຳລະໜີ້ສິນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນ ປະຈຳປີ 2022 ສຳເລັດແລ້ວກ່ອນທັງໝົດ ຈຶ່ງຊຳລະໜີ້ສິນຕາມມູນຄ່າລວມທັງໝົດຂອງແຕ່ລະລາຍການໃຫ້ວິສາຫະກິດ ທີ່ຊະນະການປະມູນປະຈຳປີ 2023 ໂດຍປະຕິບັດຕາມສັນຍາທີ່ຕົກລົງຮ່ວມກັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດທີ່ມີຄວາມພ້ອມຕາມເງື່ອນໄຂ ແລະ ຈຸດປະສົງທີ່ກ່າວມາຂ້າງເທິງນີ້ດ້ວຍ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ຫ້ອງການ

ບ.ສົມາລາ ແກ້ວສະກຸນວົງ

**ຕິດຕໍ່ພົວພັນ:**

ໂທ:021 412000,

ທ.ແສງດາວັນ ຈັນດາວີ 020 99722047.